# ສາບ ໂສມທິຄິດ



ຣິຈນາໂດຍ: ສາຍັນດົງແດງ

ສະຖາບັນຄົ້ນຄວ້າວັດທະນະທັມ, ກະຊວງຖະແຫຼງຂ່າວ ແລະ ວັດທະນະທັມ

ວຽງຈັນ 2002

## ຄະນະຈັດທຳ

ຜູ້ກວດແກ້ : ທຸມພັນ ຣັຕນະວົງສ໌

ຜູ້ຣິຈນາ : ສົມ ພຣະໄຊຍະມົງຄຸນ

ຈັດຫນ້າ : ບົວລາ ສຸຣິຍະບັບພາ

ຄອມພິວເຕີ : ສົມ ພຣະໄຊຍະມົງຄຸນ

ບົວລາ ສຸຣິຍະບັບພາ

ອອກແບບຫນ້າປົກ : ຄຳເມີງ ສູນດາຣາ

ສົມພາວັນ ໄຊຍະວົງ


<u>ຈັດພິມໂດຍ:</u>

ສະຖາບັນຄົ້ນຄວ້າວັດທະນະທັມ

ກະຊວງຖະແຫລງຂ່າວ ແລະ ວັດທະນະທັມ


ສະຫງວນລິຂະສິດ

*ອຸທິດສ່ວນຜົນບຸນນີ້....*

*ແດ່*

*ນີ້ລາງ ທ້າວ ມີ ຜູ້ເປັນບິດາ ມໍຣະນະ ໃນວັນທີ 28 ມີນາ 1976*

*ແລະ*

*ນີ້ລາງ ນາງມຸກ ຜູ້ເປັນມານດາ ມໍຣະນະ ໃນວັນທີ 11 ສິງຫາ 1976*

*ເຊິ່ງຕົກຢູ່ໃນຄາວບ້ານເມືອງຫຸ້ງຍາກ ຫາທາງຊ່ວຍຫຸ້ງບໍ່ໄດ້.*

# ຄຳນຳຂອງຜູ້ ຣິຈນາ

ອານາຈັກລ້ານຊ້າງກ້າວເຂົ້າສູ່ຍຸກເຂັນ ຫຼັງຈາກມີຄວາມສະຫງ່າຣາສີມາໄດ້ 342 ປີນັ້ນ ຈຶ່ງເລີ່ມເສັງອິດທິພົນນັບແຕ່ສິ້ນຣາຊະການພຣະເຈົ້າສຸຣິຍະວົງສາທັມມິກກະຣາດ ໃນ ຄ.ສ 1690 ນັ້ນ ຍ້ອນພຣະອົງບໍ່ມີຜູ້ສືບຣາຊະບັນລັງແທນ. ດັ່ງນັ້ນການແຍ່ງຊີງຄວາມເປັນໃຫຍ່ໃນເຊື້ອພະວົງ ແລະ ຂຸນນາງຜູ້ໃຫຍ່ ທີ່ທຳຕົນເປັນ " **ໄສ້ໃນທ້ອງກັບເກີດເປັນໜອນ** " ໄດ້ບັ່ນຊີຄວາມເປັນຊາດໃຫ້ເສົ້າໝອງລົງ ຈົນໃນທີ່ສຸດອານາຈັກລ້ານຊ້າງທີ່ກວ້າງໃຫຍ່ໄພສານ ທີ່ຮັກສາຄວາມເປັນອັນໜຶ່ງອັນດຽວກັນມາແຕ່ສະໄໝພຣະເຈົ້າຟ້າງຸ່ມມະຫາຣາດນັ້ນ ໄດ້ແຕກແຍກຄວາມສາມັກຄີກັນທັກມຸ່ນທະລາຍລົງ ຍ້ອນຄວາມໂລບມາກໂລພາເຫັນແກ່ຕົວ ສ້າງຄວາມອາຄາດບາດໝາງກັນມາແຕ່ຮຸ່ນປູ່ ຮຸ່ນພໍ່ ແກ່ຍາວມາຮອດຮຸ່ນລູກ ຮຸ່ນຫຼານ. ແລ້ວໃນທີ່ສຸດ....

- ອານາຈັກລ້ານຊ້າງຫຼວງພະບາງ ໄດ້ແຍກຕົວອອກເປັນເອກະຣາດ ຕັດອອກຈາກອານາຈັກລ້ານຊ້າງວຽງຈັນ ໃນ ຄ.ສ 1707 ເພື່ອຄອງຄວາມເປັນໃຫຍ່ໃນອານາຈັກລາວຝ່າຍເໜືອ ແລະ ບໍ່ຍອມຂຶ້ນກັບວຽງຈັນໂດຍແມ່ນເຈົ້າ ກິ່ງກິດສະຣາດ ພະກະນິດຖາ ພຣະເຈົ້າ ສຸຣິຍາວົງສາທັມມິກກະຣາດ ຣາຊະໂອຣົດຂອງເຈົ້າ ຣາຊະບຸດ ແລະເຈົ້ານາງ ກຸມມະຣີ ທິດາໃນຣາຊະວົງເຈົ້າຟ້າຊຽງຮຸ່ງ ສະຖາປະນາຕົນຂຶ້ນເປັນກະສັດ ຄອງອານາຈັກລາວລ້ານຊ້າງຫຼວງພະບາງ.
- ອານາຈັກລາວລ້ານຊ້າງ ຈຳປາສັກ ໃຕ້ການໜູນຫຼັງຂອງພະຄູຍອດແກ້ວໂພນສະເມັກ ກໍໄດ້ແຍກຕົວອອກຈາກອານາຈັກລ້ານຊ້າງວຽງຈັນເປັນເອກະຣາດອີກ ໃນ ຄ.ສ 1714 ໂດຍຣາຊາພິເສກໃຫ້ເຈົ້າໜໍ່ກະສັດ ຣາຊະບຸດຂອງພະນາງສຸມັງຄະລາ ຣາຊະທິດາຂອງພຣະເຈົ້າສຸຣິຍະວົງສາ ເປັນກະສັຕຣ໌ສະເຫວີຍຣາຊະສົມບັຕຣ໌ ຄອງນະຄອນນັ້ນ.
- ສ່ວນອານາຈັກລ້ານຊ້າງວຽງຈັນກໍເລີຍຖືກໂດດດ່ຽວ ໃຕ້ຣາຊະການພະເຈົ້າ ໄຊອົງເຫວ້ ເຊິ່ງເປັນຣາຊະບຸດຂອງເຈົ້າຊຸມພູ ພະເຊດຖາຂອງພະເຈົ້າ ສຸຣິຍະວົງສາທັມມິກກະຣາດ ຖືກເນຣະເທດອອກຈາກ ອານາຈັກລ້ານຊ້າງໄປເພິ່ງພະເຈົ້າ ພູຊູນທີ່ອານາຈັກດ້າຍຫວຽດ ແຕ່ ຄ.ສ 1634 ພຸ້ນ.

ຕໍ່ການຂັດແຍ້ງແຍ່ງດີໃນສາມອານາຈັກທີ່ມີຄວາມອາຄາດບາດໝາງປອງຮ້າຍເຊິ່ງກັນແລະກັນນີ້ ຣາສະດອນລາວຕາດຳໆພອຍບໍ່ໄດ້ຮັບຜົນປະໂຫຍດອັນໃດເລີຍ ນອກຈາກຈະມືນຕາຢູ່ກ້ອງຕີນຄວາຍເຖິກສາມໂຕ ຊົນກັນເພື່ອສຳແດງລິດໃຕ້ຫຍ້າແຝກທີ່ປາກບໍ່ໄດ້ໄອບໍ່ອອກ ດັ່ງຄຳສຸພາສິດບູຮານກ່າວໄວ້ວ່າ: " **ຄວາຍຊົນຄວາຍແພ້ຫຍ້າແຝກ ແດດອອກແພ້ພູເຂົາ** ".

ຕໍ່ໜ້າສະພາບການທາງປະຫວັດສາດ ທີ່ມີແຕ່ເຄາະເຂັນແນວນີ້ ບໍ່ມີເຈົ້ານາຍ ຕະຫຼອດຮອດກະສັດຂັດຕະຍາອົງໃດເລີຍມີຫົວຄິດປັນຍາຢາກກອບກູ້ເອົາຄວາມເປັນອັນໜຶ່ງອັນດຽວຄືນມາໄດ້ຄືກັນກັບສະໄໝທີ່ ອານາຈັກລ້ານຊ້າງມີຄວາມຮຸ່ງເຮືອງໄພບູນ. ຕ່າງຄົນກໍຕ່າງແຍກອອກຈາກ

ກັນ ທັບຫຼັງໃສ່ກັນ ແລ້ວຂິບຂວາຍເອົາພິນຣິບຄົນທານທີ່ໄວ້ໃຈຂອງໃຜຂອງມັນເຂົ້າປະຈັນບານເຂັ່ນຂ້າເຊິ່ງກັນ ແລະ ກັນຢ່າງບໍ່ຮູ້ຈົບສິ້ນນານເຖິງ 73 ປີ ຄືແຕ່ 1694 ຈົນຮອດ 1779 ຈຶ່ງຕົກມາເຖິງຊາຕາເຄາະກັມຂອງຊາວລ້ານຊ້າງຕ້ອງມອດແສງລົງອີກກັບຄວາມເສັຽຊາດໃຫ້ແກ່ສະຫຍາມປະເທດ.

ຄັ້ງທີໜຶ່ງ ພາຍໃຕ້ຣາຊະການຂອງພະເຈົ້າສີຣິບຸນຍະສານ ແຫ່ງອານາຈັກລ້ານຊ້າງວຽງຈັນ. ການທີ່ສະຫຍາມປະເທດ ພາຍໃຕ້ອຳນາດຂອງເຈົ້າຕາກສິນ ທີ່ມີມືອຳນາດເໜືອກວ່າ ຍຶດເອົາລາວທັງສາມອານາຈັກເປັນປະເທສສະຣາດນັ້ນ ບໍ່ໄດ້ນຳເອົາຄວາມສົມບູນພູນສຸກມາໃຫ້ຊາວລາວແຕ່ຢ່າງໃດເລີຍ ຍິ່ງເພີ່ມແອກເຕັ່ງຄໍດ້ວຍການເກັບສ່ວຍ ແລະ ການກະເກນແຮງງານແບບຂ້າທາດໄປສ້າງເມືອງກຸງເທບໃຫ້ສະຫຍາມ. ດັ່ງນັ້ນ ແຜ່ນດິນລ້ານຊ້າງທັງແຜ່ນຈຶ່ງຕົກຢູ່ໃນຍຸກແຫ່ງຄວາມມືດບອດລຳບາກຍາກເຂັນເຂົ້າຕົມ. ປະຊາຣາສະດອນ ປາກບໍ່ໄດ້ໄອບໍ່ອອກ ແອກຢູ່ເໜືອຄໍ ຄໍຢູ່ເໜືອຄົມດາບ. ຈາກນັ້ນມາ 48 ປີ ຄື ແຕ່ 1779 ຫາ1828 ພຣະເຈົ້າອະນຸວົງ ກະສັດແຫ່ງອານາຈັກລ້ານຊ້າງວຽງຈັນ ທີ່ຊາວລາວຖືພຣະອົງຄ໌ເປັນວິຣະກະສັດຣ໌ມາຮອດທຸກວັນນີ້ ໄດ້ຕັດສິນພຣະໄທເພື່ອທຳການກູ້ອິດສະຫຼະພາບ ແລະຄວາມເປັນເອກະຣາດຈາກສະຫຍາມ ແຕ່ວ່າພຣະປະສົງຂອງພຣະອົງຄ໌ບໍ່ໄດ້ບັນລຸເຖິງເປົ້າໝາຍເລີຍ. ອານາຈັກລ້ານຊ້າງທັງສາມ ມອດແສງລົງກັບການປະລາໄຊຂອງພຣະອົງຄ໌ອີກເປັນເທື່ອທີສອງ. ພວກສະຫຍາມຜູ້ມີໄຊໄດ້ທຳຕົນເປັນເທວະດາຄາດຕະກອນ ປຸ້ນສະດົມ ແລະຈູດເລົາເຜົາຜານ ນະຄອນຫຼວງວຽງຈັນ ພ້ອມກັນກັບທັບມ້າງຄວາມເປັນລ້ານຊ້າງລົງທັງໝົດ ບໍ່ໃຫ້ເຫຼືອເປັນຊາດເປັນເຊື້ອຕໍ່ໄປ ແກ່ຍາວມາຮອດຕົ້ນສະຕະວັດທີ 20 ເຊິ່ງເປັນບັ້ນທີ່ຊາວລ້ານຊ້າງ ທາງຝັ່ງຊ້າຍແມ່ນ້ຳຂອງ ຕົກເປັນຂ້ອຍຂ້າຂອງຝຣັ່ງ ແລະອີກສິບຫ້າລ້ານກວ່າຄົນ ທາງຝັ່ງຂວາແມ່ນ້ຳຂອງໄດ້ກາຍເປັນຄົນເສັຽຊາດ ຖືເອົາເຊື້ອຊາດໄທສະຫຍາມມາຮອດປັດຈຸບັນນີ້ແກ່ຍາວນານທີ່ສຸດເຖິງ 223 ປີ.

ໃນໄລຍະຍາວນານຂອງປະຫວັດສາດທີ່ຕົກເປັນຂ້ອຍຂ້າຕ່າງຊາດນີ້ເອງ ທີ່ຊາວລາວໝົດທັງຊາດ ຂາດອິດສະຫຼະພາບໃນທຸກສິ່ງທຸກຢ່າງ. ແຕ່ທ່າມກາງຄວາມເປັນຂ້ອຍຂ້າດັ່ງກ່າວ ຄົນລາວຜູ້ສະຫຼາດອາດຮູ້ ຜູ້ເປັນນັກປາດອາຈານ ຮູ້ແຈ້ງເຫັນຈິງແລເຫັນການໄກ ກໍຕົກຢູ່ໃນຊາຕາກັມອັນດຽວກັນກັບພີ່ນ້ອງລາວທຸກຄົນ. ເຖິງພວກເພິ່ນຊິຮູ້ດີຮູ້ຊົ່ວ ຮູ້ອັນບໍ່ຖືກຕ້ອງນອກຄອງທັມຂອງເຈົ້າພະຍາມະຫາກະສັຕຣ໌ ແລະເຈົ້າຂຸນມຸນນາຍ ທີ່ມົວເມົາຕໍ່ການແຍ້ງຊີງຄວາມເປັນໃຫຍ່ເຊິ່ງກັນ ແລະ ກັນປານໃດກໍຕາມ ແຕ່ພວກເພິ່ນກໍຖືກອຳນາດແຫ່ງຄວາມກົດຂີ່ ຂອງພະບາດສິດພະເຈົ້າຢູ່ຫົວ ຂອງເຈົ້າຂຸນມຸນນາຍດັ່ງກ່າວເຕັ່ງຄໍໄວ້ຄືກັນ ຈຶ່ງບໍ່ມີສິດສຽງ ແລະ ອຳນາດອັນໃດພໍທີ່ຈະຊ່ວຍບ້ານຊ່ວຍເມືອງໄດ້. ໃນເມື່ອຄວາມຄັບແຄ້ນແໜ້ນໃຈຫາກອັ່ງອໍຊັງໄວ້ດັ່ງນັ້ນ ບາງທ່ານກໍໄດ້ແຕ່ນັ່ງຄິດນອນຄິດ ແລ້ວກໍວາຍຊົນໄປຊື່ໆຕາມການເວລາ. ແຕ່ບາງທ່ານກໍມີອັນຄິດອັນທາງາ ຫາທາງລະບາຍຄວາມໃນໃຈຂອງຕົນອອກ ດ້ວຍການຈັບເຫຼັກຈານ ມາຈານລົງກັບໃບລານເປັນສານ ຝາກ

ຂໍ້ຄວາມປິດສະນາທີ່ຕົນຢາກສະແດງອອກ ຝາກໄວ້ກັບວັດກັບວາ ຫຼື ປະໄວ້ກັບເຮືອນກັບຊານ ຫຼື ບາງທ່ານໃສ່ຫີບໃສ່ກັບເອົາໄປຊຸກເຊື່ອງໄວ້ຕາມຖ້ຳ ເພື່ອໃຫ້ພວກລູກສິດລູກຫາ ພວກລູກຫຼານໄດ້ຊອກອ່ານ ແລ້ວພິຈາລະນາ ໄຂຄວາມໃນໃຈຂອງເພິ່ນພາຍຊ້ອຍ ທີ່ໄດ້ອ້າງໄວ້ເປັນຄວາມລັບ. ທັງນີ້ ກໍເພື່ອຫຼີກຈາກຄົມດາບຄົມຕາວຂອງຜູ້ເປັນສັດຕູ ແລະ ຜູ້ມີອຳນາດເຕັງຄໍ ດັ່ງມີໜັງສືປະເພດສານນີ້ເກີດຂຶ້ນຫຼາຍທີ່ສຸດໃນສະໄໝນັ້ນເຊັ່ນ: **ສານ ລຶບພະສູນ ສານບັງລະທັດ** ***ສານໂສມທີຄືດ*** **ສານສຸດທີອ່າວ ສານນ້ຳລົ້ນຕ້ອນ ສານຟ້າສັ່ງນ້ອງ** ດັ່ງນີ້ເປັນຕົ້ນ. ສານປະເພດປິດສະໜາດັ່ງກ່າວ ບໍ່ຄ່ອຍຈະເຫັນໃນວັດໃນວາປານໃດ ມັກພົບເຫັນແຕ່ນຳປະຊາຊົນ ທີ່ເພິ່ນຊຸກເຊື່ອງໄວ້ເປັນມູນມໍລະດົກສືບທອດກັນມາ ຫຼື ກໍກ່າຍຕໍ່ມີກັນມາແບບລັບໆ ເວລາອ່ານສູ່ກັນຟັງກໍບໍ່ອ່ານໃນສາທະລະນະຊົນ ແລະ ບໍ່ໄດ້ໃຊ້ເປັນໜັງສືເທດລຳ ຄືໜັງສືສູດທັມລຳພະເຈົ້າອື່ນໆ. ເພິ່ນມັກອ່ານເວລາຫວ່າງວຽກຫຼັງຈາກພັກວຽກໄຮ່ການນາ ຕາມຖຽງນາ ແລະ ບ່ອນພັກຜ່ອນອື່ນໆທີ່ເຫັນວ່າປອດໄພຈາກສັດຕູ ແລະ ເຈົ້າໃຫຍ່ນາຍໂຕຈະມາພົບເຫັນ. ແຕ່ສານດັ່ງກ່າວພັດນິຍົມແຜ່ຫຼາຍໃນໝູ່ມະຫາຊົນ ຜູ້ບ່າວຜູ້ສາວມັກທ່ອງເອົາໄປເປັນກອນຜະຫຍາຂັບລຳຕໍ່ແຍກັນ ສ່ວນມາກແລ້ວທາງພາກກາງ ພາກໃຕ້ ຂອງອານາຈັກລ້ານຊ້າງໃນເມື່ອກ່ອນທັງສອງຟາກຝັ່ງແມ່ນ້ຳຂອງ. ພິເສດໜັງສື ສານ ໂສມທີຄືດ ທີ່ມີເນື້ອຫາ ສຽດສີເຢາະເຢີ້ຍການເມືອງ ສັງຄົມ ດ້ວຍຄວາມເວົ້າປິດສະນາພາໃຫ້ຄຶດນີ້ ພົບເຫັນຫຼາຍກວ່າເພິ່ນ ແຕ່ຫຼວງພະບາງ ວຽງຈັນ ສະຫວັນນະເຂດ ຈຳປາສັກຮອດຝັ່ງຂວາແມ່ນ້ຳຂອງ ທີ່ເປັນພາກອີສານຂອງປະເທດໄທຍ໌ປັດຈຸບັນ. ທາງຫຼວງພະບາງເພິ່ນເອີ້ນວ່າ ໜັງສືປະໂລມໂລກ ຫຼື ປະໂລມໂລກໂສມທີຄືດ ສ່ວນທາງພາກກາງຄືເຂດແຂວງວຽງຈັນກໍພົບຢູ່ຫຼາຍບ່ອນເຊັ່ນ ທີ່ເມືອງ ທຸລະຄົມ ບ້ານນ້ອຍຊຽງດາ ແລະໃນຫໍສະໝຸດວຽງຈັນຂອງໂຄງການປົກປັກຮັກສາໃບລານລາວ. ສ່ວນທາງພາກກາງນັບແຕ່ສະຫວັນນະເຂດລົງໄປຖືວ່າເປັນວັນນະກັມອີງປະຫວັດສາດທີ່ມີຜູ້ອ່ານ ແລະ ຜູ້ນິຍົມທີ່ສຸດ ນັບແຕ່ກາງສະຕະວັດທີ 19 ເປັນຕົ້ນມາຮອດທຸກວັນນີ້.

ສານ ໂສມທີຄືດ ຖືໄດ້ວ່າເປັນວັນນະກັມປະເພດອີງປະຫວັດສາດທີ່ມີ ອິດທິພົນສູງສົມຄວນໃນສັງຄົມຊາວລາວ ສະທ້ອນເຖິງປະຫວັດສາດທີ່ເຈັບແສບໃນອະດີດຜ່ານມາ ແຕ່ເພິ່ນເຮັດຫຍັງບໍ່ໄດ້ຖ້າໄຂຄວາມຈິງອອກໃນສະໄໝນັ້ນກໍມີແຕ່ເກີດໄພໃສ່ຕົນຢ່າງດຽວ ແຕ່ໃນທ່ຽງແທ້ຂອງຄວາມເປັນຈິງນັ້ນ ຜູ້ແຕ່ງໄດ້ແຕ່ຊຽນປະໄວ້ໃນເຊີງບັນລະຍາຍໄວ້ເປັນກອນສານ ເຜີຍອອກແດ່ ປິດບັງໄວ້ແດ່ ຖ້າໃຜຮູ້ແລ້ວ ກໍຕ້ອງປົກຕ້ອງງຳໄວ້ກ່ອນ ດັ່ງໃນຕອນສຸດທ້າຍຂອງສານໄດ້ກ່າວໄວ້ວ່າ:

**785 -** **ໂສມທີຄືດທິ້ງເຊີດແກ້ວ ຖືດາບຄັນໄຊ**
**ເຈົ້າຈຶ່ງ ຮວາຍອາຄົມ ເປົ່າໄປເປັນນ້ຳ**
**ມະນີໄຊແກ້ວ ທຳມະໂລງສິບສອດ**

ທີ່ງດາບ | ເປື້ອງປີ້ນໜ້າ | ມາແລ້ວສັ່ງເມືອ

786 - ຄັນວ່າ | ທີ່ງຄຳມາຈັບຕົ້ນ | ໂພໄຊຢ່າໄຂຕໍ່ ຜູ້ໃດເນີ
 | ນົກເຂົາທອງຈັບຕົ້ນຄໍ້ | ພໍ່ຊິເວົ້າກໍ່ຢ່າໄຂ

787 - | ໝັກເບົາໄວ້ | ບັນເທົາປັ້ນຫຸ່ນ ເອົາທ້ອນ
ເສືອໂຄ່ງ | ກິນລູກແບ້ | ໃຜຊິເວົ້າກໍ່ເກີດໂພຍ ເຈົ້າເອີຍ

788 - ຄັນວ່າ | ເຫັນເສືອຊ້ຽວ | ຫງວທາງກໍ່ຢ່າປາກ
 | ເສືອໂຄ່ງທຳເພດໃບ້ | ກໍ່ຢາເວົ້າຕໍ່ໃຜ ອຸ່ນເຮີຍ....ຯລຯ

ສານ ໂສມທິຄຶດ ທີ່ຈັດອອກມາພິມຜູກນີ້ ມີເກົ້າສິບໃບລານ ໄດ້ຈາກແມ່ເຖົ້າລ້ອນອາຍຸແປດສິບປີ ບ້ານນາຄູ ເມືອງຈຳພອນ ແຂວງສະຫວັນນະເຂດ ທີ່ເພິ່ນຮັກສາໄວ້ເປັນມູນຈາກ ທ່ານມີ້ລາງ ອາຈານ ມະຫາແພງ ຜູ້ເປັນອ້າຍທີ່ໄດ້ເຄີຍມາຮຽນຢູ່ໂຮງຮຽນ ບາລີນະຄອນວຽງຈັນ ນຳຄະນະສະພາບັນດິດຈັນທະບູລີ ຊຸດທຳອິດໃນປີ ຄ.ສ 1935. ໃນຕອນທ້າຍຂອງສານສະບັບນີ້ ຜູ້ກ່າຍສືບມາກ່າວມ້ອນທ້າຍວ່າ:

*ໂສມທິຄຶດ ໝົດບົດບັ້ນ ໂຍນາໄວ້ທັ້ນກ່ອນ ສາວຜູ້ດີເອີຍ*
*ຣິຈນາແລ້ວ ຍາມແລງໃກ້ຄ່ຳ.....*

*ເດືອນເກົ້າຂຶ້ນທົກຄ່ຳ ວັນຄານ ປີກຸນ ທຸຕິຍະສາດ ແປດສອງທົບ ສັງກາດພັນສອງຮ້ອຍຫົກສິບສອງ ( ຈຸນລະສັງກາດ 1262 ຄຣິດຕະສັງກາດ 1898 ) ຄຸນ ເທບ ທອງວິຈິດ ທັມມະຫານິວິເສດວົງສາ ວິຣິຍະປັນຍາ ເປັນຜູ້ຂຽນ ໜັງສື ໂສມທິຄຶດແກ່ **ຄູບາໂສມ** ຂໍໃຫ້ໄດ້ບຸນເທົ່າກັນ.*

ດັ່ງນັ້ນ ໜັງສືຜູກນີ້ຂຽນຂຶ້ນມາໄດ້ 104 ປີແລ້ວ ຂຽນຢູ່ໃສນັ້ນເພິ່ນບໍ່ບອກແຈ້ງ ແຕ່ພໍອະນຸມານໄວ້ວ່າ **ຄູບາໂສມ** ທ່ານເປັນສັດທາໃນໜັງສືຜູກນີ້ ແມ່ນ ເຈົ້າອະທິການວັດບ້ານນາຄູສະໄໝນັ້ນ ເພາະຜູ້ເຖົ້າແກ່ຮາກບ້ານຮາກເມືອງໄດ້ຢັ້ງຢືນວ່າ ພະອາຈານເຈົ້າອະການວັດອິງດັ່ງກ່າວ ໄດ້ເປັນເຈົ້າອາວາດວັດອິງທຳອິດຂອງວັດສືບຸນເຮືອງບ້ານນາຄູແທ້ກ່ອນຝຣັ່ງເຂົ້າມາເອົາລາວປະມານ 20 ປີ ແຕ່ສົມພານວັດອິງນີ້ ມີປະຕິພານພິເສດ ຄືເປັນຄົນຕາບອດແຕ່ເກ່ງໃນເລື່ອງເທດລຳ ມີຄວາມຈຳໃນການທ່ອງໜັງສືເປັນເລີດ ຈົນອອກຕົນຍາດໂຍມຜູ້ມີສັດທາໄດ້ໃຫ້ນາມມະຍົດເພິ່ນວ່າ **ຍາຄູຕາແຈ້ງ** ເພິ່ນຈຶ່ງໃຫ້ທ່ານ ເທບ ທອງວິຈິດ ເປັນຜູ້ຈານໜັງສືຜູກນີ້ໃຫ້ແກ່ເພິ່ນ. ຈຶ່ງເປັນອັນເຊື່ອຖືໄດ້ວ່າ ພະອາຈານ ຕ້ອງແມ່ນທ່ານໜຶ່ງ ທີ່ສະຫງວນມັກ ຫຼື ບໍ່ກໍ່ທ່ອງໄດ້ກັບປາກໃນກອນສານດັ່ງກາວບໍ່ໜ້ອຍ.

ການຈັດພິມເຜີຍແຜ່ເທື່ອນີ້ ຂ້າພະເຈົ້າພະຍາຍາມ ຮັກສາເຄົ້າເດີມຈາກສະບັບເດີມ ໃນດ້ານສຳນວນກອນ ແລະ ເນື້ອຫາສາລະທຸກຢ່າງ ເພາະວ່າເປັນບົດກະວີທີ່ມ່ວນ ອອນຊອນໃນເຊີງຜະຫຍາຍ່ອຍ ບໍ່ມີຄຳສັບເລິກ ເປັນຄຳສັບທັມມະດາ ແຕ່ແຝງດ້ວຍຄວາມປິດສະໜາ ຈົນບາງສຳນວນ ບາງບົດບາງວັກບໍ່ເຂົ້າໃຈວ່າ ທ່ານຜູ້ແຕ່ງຢາກກ່າວເຖິງຫຍັງ. ສ່ວນມາກແລ້ວ ມີພຽງ ວັກຮອງ ແລະ ວັກສິ່ງເທົ່ານັ້ນ ສ່ວນບົດທີ່ມີເຕັມ ສີ່ວັກນັ້ນມີໜ້ອຍ ລວມເປັນຄຳກອນ ຜະຫຍາຍ່ອຍທັງໝົດ 789 ບົດ ໃນນັ້ນມີບົດທີ່ເຕັມ ສີ່ວັກມີພຽງ 79 ບົດ. ໃນບາງວັກ ບາງຕອນກໍມີການຂາດຕົກບົກຜ່ອງເລັກນ້ອຍ ຫຼື ບໍ່ກໍຈານຜິດ ອາດເປັນຍ້ອນຜູ້ກ່າຍຕໍ່ໆກັນມາບໍ່ໄດ້ມີຄວາມລະມັດລະວັງພໍເທົ່າໃດ ໃນການຮັກສາເຄົ້າເດີມຂອງຜູ້ແຕ່ງໄວ້ ເຊິ່ງຜູ້ກ່າຍຕໍ່ມືອາດຈະມີການເພີ່ມເຕີມຫຼືດັດແກ້ໃນສິ່ງທີ່ໂຕມັກ ຫຼື ບໍ່ກໍຕັດອອກໃນສິ່ງທີ່ໂຕບໍ່ຕ້ອງການ ອັນເປັນເລື່ອງທັມມະດາໃນໜັງສືວັນນະກັມບູຮານລາວເກືອບທຸກເລື່ອງ. ແຕ່ຂ້າພະເຈົ້າຜູ້ຣິຈນາເອງພະຍາຍາມສຸດຂີດເພື່ອຮັກສຳນວນ ແລະເນື້ອໃນທີ່ເປັນຂອງແທ້ ດັ່ງເດີມໄວ້ ທັງໄດ້ຂຽນເປັນສຳນວນໄວຍາກອນສະໄໝປັດຈຸບັນ ເພື່ອເປັນການຄົ້ນຄວ້າສຶມຫຼຽບ ແກ່ນິສິດ ນັກສຶກສາ ປັນຍາຊົນ ຕະຫຼອດປະຊາຊົນທຸກຊັ້ນຄົນທີ່ສົນໃຈໃນຄຳກອນປິດສະນາປະຫວັດສາດສະບັບນີ້ ໃຫ້ອ່ານງ່າຍ ແລະ ຫາທາງເຂົ້າໃຈເນື້ອຫາປິດສະໜາໄດ້ .

ໃນສານ **ລຶພສູນ** ຣິຈນາໂດຍ ທ່ານ ອາຈານ ມະຫາສີລາ ວີຣະວົງສ໌ ແລະຈັດພິມເຜີຍແຜ່ໂດຍ ຄະນະກັມມະການ ວັນນະຄະດີລາວ ຄັ້ງ ວັນທີ 1 ກຸມພາ 1967 ທີ່ຈັດເປັນສາມບັ້ນຄື **ບັ້ນ ບັງລະທັດ** **ບັ້ນສິມທີຄຶດ** **ແລະ** **ບັ້ນສຸດທີ່ອ່າວ** ນັ້ນ ບັ້ນສິມທີຄຶດເປັນບັ້ນທີ່ມີເນື້ອຫາຄ້າຍຄືກັນກັບ **ສານໂສມທີຄຶດ** ທັງສຳນວນກອນກໍແຕກຕ່າງກັນເລັກນ້ອຍ ແຕ່ບັ້ນສິມທີຄຶດຂອງສານລຶພສູນນີ້ສັ້ນກວ່າ ຄືມີພຽງ 79 ບົດ ສ່ວນບົດທີ່ເຕັມສີ່ວັກແທ້ມີພຽງ 3 ບົດເທົ່ານັ້ນ. ຂ້າພະເຈົ້າຈຶ່ງຈັດເອົາມາພິມເສີມຕື່ມ ເພື່ອບັນດາທ່ານຜູ້ອ່ານ ນັກຄົ້ນຄວ້າ ນິສິດ ນັກສຶກສາ ຕະຫຼອດທ່ານຜູ້ສົນໃຈອື່ນໆ ນຳເອົາມາຄົ້ນຄວ້າສຶມຫຼຽບ.

ສາຍັນດົງແດງ

# ສານໂສມທີຄຶດ

1 - ດວງນີ້ ຊື່ວ່າ    ໂສມທີຄຶດຄວນຄ່າລ້ານ    ມະນີໄຊລູກປະເສີດ
ວ່າຈັກ    ຂອດໂຮມທໍ່ຕູ້ມ    ຖະໜອມແກ້ວຄ່າເມືອງ

2 - ຈຶ່ງຄ່ອຍ    ຜາຍພົນອ້ອມ    ມະຫານິນທຽມພ່າງ
ແສງອ່ອນອ້ວນ    ພິລາເຂັ້ມເຮື່ອເຮືອງ

3 - ຍັງຢາກ    ໄປວານຝູງພີ່ນ້ອງ    ພົງສາໃຫ້ມາຊ່ວຍ ຊິຄືລື
ທັງໝູ່ຫໍ້    ເຊີນພ້ອມພ່ຳຊະວາ

4 - ເຊີນແມ່    ມາຜັດສີແກ້ວ    ທຳມະໂລງໃຫ້ເຮືອງຮຸ່ງ
ຫຼອນວ່າ    ບຸນຍັງຈະນ້າວສິ່ງຂຶ້ນ    ແສງເທົ້າທົ່ວເມືອງ ບໍ່ຮູ້

5 - ຍັງຢາກ    ຂັດໝູ່ແກ້ວ    ຖືຄ່າຄຳແສນ ເພື່ອນພຸ້ນ
ປຸນປຽບ    ເອົາທຳມະໂລງ    ໃຫ້ຮຸ່ງເຮືອງຖຸງຟ້າ
ມະນີໄຊຂຶ້ນ    ເຮືອງແສງໃສຮຸ່ງ
ຫີນແຮ່    ເກົາຂູດທົ້ນ    ຕົກສະເງົ້ຄູດທອງ.

6 - ອັນວ່າ    ຜັກຕົບເຂັ້ມ    ມະຫານິນນ້ຳຄັ່ງ ພິລານັ້ນ
ທະນຸ    ຮ້ອຍແລະເສັ້ນ    ແສງກົ້ວຝຸ່ນດິນ

7 - ແກ້ວກໍ    ຍັງວ່າແກ້ວ    ຊື່ວ່າແສນເມືອງ ແມ່ເຮີຍ
ບໍ່ໄຊ່    ແນວຊາຍຝັງ    ແຮ່ຊະຄອມແຄມນ້ຳ
ຫາກບໍ່    ໂສດາແກ້ວ    ທັມມະໂລງກໍຕາມໄຊກເຮົາຖ້ອນ
ຫີນແຮ່    ເຈົ້າຫາກກຸມວ່າແກ້ວ    ຕາມເຈົ້າຊິວ່າລີ

8 - ຍງວ່າ ເຈົ້າຊິຫາຄຳຕູ້ມ ທຳມະໂລງກໍ້ວຝຸ່ນ ດິນຫຼີ
ເຂີກແດງ ມາເຊື່ອງຊ້ອນ ແຄມຮົ້ວແຮ່ຊະຄອມ

9 - ຊາດທີ່ ຊາຍເທີນຫຼ້າງ ທະລອນທອມແຕ່ມື້ໃໝ່
ຕັ້ງໃຫ້ ຫອມຍິ່ງແທ້ ບໍ່ມີໄດ້ແກ່ນຈັນ

10 - ຊາດທີ່ ຈັນໂສມສົ້ມ ທະລອນທອມແຕ່ມື້ໃໝ່
ບາດວ່າ ກົ້ວກິ່ນສົ້ມ ຊິມແລ້ວ ກໍເຫຼົ່າເທີຍ

11 - ເມື່ອຈັກ ໄຂລະຫັດຕ້ອນ ເຄືອງປາເຂີນລອບ ຊິເປັນລີ
ບໍ່ໄດ້ ເຄືອງແຕ່ຕ້ອນ ຄູນຄ້າວກໍ່ຫາກເຄືອງ

12 - ເຖິງລະດູເດືອນຫ້າ ໄຟລາມໃໝ້ປ່າ ໄປນັ້ນ
ແມ່ນວ່າ ສັດສິ່ງເນື້ອ ໝີເໝັ້ນກໍ່ຟັ່ງເຟືອນ

13 - ເຫດວ່າ ສັງຂານຂົ້ນ ອັງຄານຍາມທ່ຽງ
ຄັນວ່າ ເຈົ້າບໍ່ພາຍໂພດລ້ຽງ ກໍທິນທ້ອງຫວກເລີງ ອຸ່ນເຮີຍ

14 - ຄັນວ່າ ບໍ່ຫາຂອງແກ້ມ ທຽມທອມກໍຊ້ຳເຟືອນ ໄປນັ້ນ
ຫາກບໍ່ ໄດ້ໝີ່ໝຽງ ມາພ້ອມພ່ຳພາ

15 - ຫຼອນວ່າ ຂິນຂວາຍໄດ້ ເສີມພາໄວ້ກ່ອນ ກໍດີຖ້ອນ
ຄັນບໍ່ ໄດ້ໃສ່ໝ້ຽງ ເກືອພ້ອມກໍ່ເຫຼົ່າຈາງ

16 - ອັນທີ່ ຊາກຈອບໝ້ຽງ ປະສົງໃສ່ຂີງເຜັດ ວ່າລີ
ຢ້ານແຕ່ ຊິມສະຫງວນຫຼາຍ ເຫຼົ່າຈາງເຄັມພົ້ນ

17 - ຢ່າໄດ້ ເປັນດັ່ງຊາຍກະເລີງຫຼ້າງ ບາຍຫຼາຖະແຫຼງແຂກ
ສາມມື້ ຈຶ່ງໄດ້ຖ່ອງລົ້ ພໍຖ້ອນ ປີນີ້ຝ້າຍຊິແພງ ບໍ່ຢ່າແລ້ວ

18 - ຟັງເຢີ ! ບໍ່ໄດ້ແໜຖະແຫຼງເຣື້ອງ ແປງສານໄສໂສກ ຜູ້ໃດນັ້ນ
ບໍ່ໄດ້ ຕ້ານຕໍ່ຖ້ອຍ ຂວັນເຈົ້າທໍ່ໄຍ

19 - ອັນວ່າ ຫົນທາງມີຫຼາຍເສັ້ນ ຕາມໃຈຈິເລືອກໄຕ່ ໄປຖ້ອນ
ຄັນວ່າ ເຈົ້າຫາກມັກເສັ້ນເວົ້າ ທາງລ້ຽວກໍ່ຫາກຍັງ

20 - ໜູຫາກ ໝາງເໜັນຢ້າວ ຊິລິ້ງນອນກົ້ວຝຸ່ນ ກໍຕາມຖ້ອນ
ແມວຫາກ ຮູ້ເມື່ອຂໍ້ ເຫີງແລ້ວຈິ່ງຄ່ອຍຟັງ

21 - ວ່າບໍ່ ໂສດາດ້ວຍ ປູປາຊິ້ນຕ່ອນ ກໍ່ຕາມຖ້ອນ
ອິດພໍ່ ໄດ້ຢູ່ຢ້າວ ຊາມໄດ້ໂຜດແມວ

22 - ໜູບໍ່ ມັກຢູ່ຢ້າວ ໝາງໂກບຊ້ຽງຝາ ແຜ່ນນັ້ນ
ສັງບໍ່ ບິນບິນເທາະ ຢູ່ເຫີງສະເໜີແຮ້ງ
ໜູຫາກ ເໜັນໝາງຢ້າວ ແມວຊິແໜແໜງວ່າ ຊິເປັນລື
ຍັງຢາກ ປັ້ນໜຽວເຂົ້າ ຄືນຊາໍສິ່ງຄຸນ

23 - ຫາກບໍ່ ໂສດາແທ້ ຄືນມາຂໍສິ່ງ ໄປຖ້ອນ
ວ່າຢາກ ກິນຮາກໄມ້ ຕາງເຂົ້າກໍ່ຊ່າງເຢີ

24 - ບໍ່ໄດ້ ຈຳອິກເຈົ້າ ກິນສານຂອງເບື່ອ ເມົານັ້ນ
ເຈົ້າຫາກ ເປັນຜູ້ຮູ້ ໃຜຊິໄດ້ຮ່ວມຮຽງ

25 - ເມື່ອນັ້ນ ຂ້ອຍກໍວອນວານຫ້າມ ກະເທີນຄວມຕ້ານແຂກ ມານັ້ນ
ຜີວ່າ ໄດ້ຢູ່ແທ້ ຂໍເວົ້າຝາກຄວາມ

26 - ບຸນບໍ່ ເຄີຍພົບເຂົ້າ ສາລີຂາວອ່ອນ ບຸນເອີຍ
ສັງບໍ່ ປັ້ນໜ່ຽງເຂົ້າ ຄົນຈ້າວແຈ່ວຊີງ

| | | |
|---|---|---|
| 27 - ເມື່ອບໍ່ | ໄຂລະຫັດໃຫ້ | ເປັນຄວາມພໍສະໜ່ອຍ ໄປນັ້ນ |
| ຝູງໝູ່ | ຊາວບອດໃບ້ | ເຂົາຊິຮູ້ຮ່ອມໃດ |
| 28 - ແຂ້ບໍ່ | ຕີທາງໃຫ້ | ຊາວມອງຊິຮູ້ເມື່ອ ເປັນລື |
| ຫວັງຈັກ | ຄິດສະເດືອກຮູ້ | ວ່າມີແຂ້ເງືອກງູ |
| 29 - ຄັນບໍ່ | ປູແຜນໃຫ້ | ແປນຕົວກໍຫາຍາກ |
| ຕາບອດ | ຫຼຽວເບິ່ງນ້ຳ | ນະທີກວ້າງກໍວ່າຄວັນ |
| 30 - ປີໃດ | ປີຮວາຍຍີ່ | ຈຶ່ງລອນມາຟັງຂ່າວ ເອົາຖ້ອນ |
| ກົບຂຽດ | ບໍ່ຄ່ອຍຄິດສະເດືອກຮູ້ | ເດືອນຫ້າຊິເຫຼົ່າໜາວ |
| 31 - ຟັງຍິນ | ໝູໝາຫ້ວງ | ກາງແຖໃກ້ທ່ຽງ |
| | ລ້ຳຕູດຊ້າຍ | ເລີຍເຂົ້າບ່າຍແລງ |
| 32 - ຫຼັບມາ | ພໍຍາມຍັ້ງ | ຟັງສຽງທົກແຫກ |
| | ກົບຂຽດຮ້ອງ | ແບໃຕ້ແບດເໜືອ |
| 33 - ບໍ່ໄຊ່ | ຍາມເດືອນຫ້າ | ໜາໄນກໍ່ມາທ່ຽວ ໃດນໍ |
| ເປັນດັ່ງ | ປີກາບເຮົ້າ | ຊາວຄ້າຈຶ່ງຊິທົວ |
| 34 - ໜູຫາກ | ຫຼັບຕາຖິ້ມ | ຫາແມວຫຼາຍເທື່ອ ເລິງແລ້ວ |
| ເຈົ້າຢ່າ | ຖິ້ມໂທດໄວ້ | ເສັງຜຽນວ່າແມວ |
| 35 - ຟັງເຢີ | ຝູງໝູ່ລາວຫຼີງຄ້າງ | ຊາວພວນນ້ຳງື້ມ |
| | ທັງໝູ່ຫົ້ | ເຂີນພ້ອມພ່ຳຊະວາ |
| 36 - ຟັງເຢີ | ຝູງໝູ່ຄວ້າງ | ແຄ້ນຄັ້ງຄວາມຄິດ ແມ່ເຮີຍ |
| ເຂີນແມ່ | ທົ່ງພະໄທຈິດ | ຄ່ອຍຟັງເຮົາຕ້ານ |

37 - ຫຼອນວ່າ ຖາມຜິດຖ້ອຍ ພອນຂືນຂັດວາດ ກໍດີຖ້ອນ
ເຈົ້າຢ່າ ໄດ້ຍຸ່ນຫງໍ້ ຝູງໃບ້ເພິ່ນຊິຟັງ

38 - ເຈົ້າຫາກ ເປັນຄົນຮູ້ ຫຼອນມາຟັງຂ່າວ ດອມຖ້ອນ
ໄວ້ແກ່ ຝູງໝູ່ສາວສໍານ້ອຍ ຄົນໃບ້ຊິຄ່ອຍຟັງ

39 - ຫຼອນວ່າ ເຈົ້າຫຼີກເວັ້ນ ລົ້ມທ່າວທວງສະຫຼົບ ແມ່ເຮີຍ
ກົວຈະ ເປັນຄໍາເຄັມ ຟັ່ງເຟືອນທັງຄ້າຍ

40 - ບຸນບໍ່ ເຄີຍກິນອ້ອຍ ຂອງຫວານກໍມາຝາດ
ຂອງຝາດ ປຸນວ່າຫວານກວ່າອ້ອຍ ເມືອໜ້າຫາກຊິເຫັນ

41 - ອ້ອຍບໍ່ ລົມພໍລົ້ມ ຊີມຊະງາວແຕ່ພໍຂ່າວ ກໍເອົາຖ້ອນ
ຍັງຢາກ ໄວ້ບາດຫຼ້າ ຊິຂາຍແຈ້ນບາດຄໍາ

42 - ຂອງຫວານ ມາວ່າສົ້ມ ຈວງຈັນກໍລືມວາດ ຫອມລື
ເຂົາຮໍ່ ເຈົ້າວ່າ ຫວານກວ່າອ້ອຍ ຍອນຄວ້າງເພິ່ນຊິຫົວ

43 - ເຈົ້າຢ່າ ລົບເທດັ້ງ ຈວງຈັນກາໍຝ່າຍ ນະຄອນພຸ້ນ
ຍັງຈິ ຫອມເຟືອນຂຶ້ນ ເຄືອມຄວ້າງຊິເຫຼົ່າຖາມ.

44 - ຜີບໍ່ ມີຫຼາຍຂໍ້ ຢາກໄປດູຖາມຂ່າວ ດູເດ້
ເພິ່ນຊ່າວ່າ ເຈົ້າຢາກລ້ຽງລູກແບ້ ຂາຍຊ້າງແລກແມວ

45 - ຫຼອນວ່າ ໂສມສິ່ງຄວ້າງ ຫຼອນມາໃຫ້ສິ່ງຂ່າວ ໄປຖ້ອນ
ແມ່ທຸກ ຍັງຢາກ ເຂາະຂອດຊີ້ ເອົາແກ້ວຄ່າເມືອງ.

46 - ເຊີນກູນາ ລົມສະເຫຼົາຜູ້ ຈັນທະບູລີກາໍຝ່າຍ ນະຄອນພຸ້ນ
ຜີບໍ່ ຈິນເທດບ້ານ ມາພີ້ຊິຝາກຄວາມ

47 - ຄວາມຄິດ ມີຫຼາຍຂໍ້ ເຮືອຄຳຄ້າງທ່າ ເຮົານັ້ນ
ຍັງຢາກ ຕ້ານໄຕ່ຖ້ອຍ ຖາມເຄົ້າຂ່າວຄວາມ

48 - ປີໃດ ສັງຂານຂຶ້ນ ວັນເສົາໃກ້ຄ່ຳ
ຫາກແມ່ນ ປີນ້ຳຖ້ວມບ້ານ ນາເຮື້ອຊິຮຽກຝົນ

49 - ສັງຂານຂຶ້ນ ເຖິງຍາມໃກ້ທ່ຽງ
ຄືຊິ ໄດ້ໄຊກຊ້ອຍ ປີນີ້ບໍ່ສິງ

50 - ຄັນວ່າ ບໍ່ມີສັງມາພານພໍ້ ສິງໄສຈັກຊິໄຊກ ສັງເດ
ໄດ້ລືກຟ້າ ຂາວແຈ້ງຮຸ່ງເຮືອງ

51 - ອິນເຮີຍ ເຊີນຊ່ວຍ ຍໍຍົກນ້າວ ທຳມະໂລງເຍື້ອນສິ່ງ ແດ່ຖ້ອນ
ດຽວນີ້ ຍັງຢູ່ຄ້າງ ດອມເຈົ້ານາກຄຳ

52 - ເຊີນມາ ກູນາຜັງນ ຜາຍຄຳພຽນໂຜດ ເອົາຖ້ອນ
ດຽວນີ້ ຍັງຢູ່ນ້ຳ ຈີມປີ້ງໄປ່ພູ

53 - ກໍບໍ່ ທຳແຜນໄດ້ ພໍເງົາພຸມພູ່ ແມ່ເຮີຍ
ຄັນວ່າ ອິນບໍ່ນ້າວສິ່ງໃຫ້ ບໍ່ໂດຍໄດ້ດັ່ງຄະນິງ

54 - ເຈົ້າຜູ້ ສິມພະຍັບເຂັ້ມ ໄໝຄຳຄຽນຄາດ ອີ່ຮຽມເອີຍ
ສັງມາ ມືວມືດກຸ້ມ ກວມແໜັນອັ່ງທວງ

55 - ເມື່ອຊິ ໄຂລະຫັດແປ້ ກໍກິວຝົນຟ້າຊີຜ່າ ແມ່ຕື່
ແມວບໍ່ ໄດ້ທອດທະເນີ້ງ ຊິເກົາທົ້ນຄູດທວງ

56 - ປີນີ້ ແມ່ນປີໃດ້ ຮວາຍຍີເຮົ້າຮ່ວງ
ຜີບໍ່ ໄດ້ທ່ຽວຄ້າ ຍັງບ້ານກໍ່ອອກທຶນ

57 - ເພິ່ນຊິ ເອົາມາໃຫ້ ຄຳຊາວພໍ່ຂ່າວ ຊິຄືລື
ແທງນກິ່ງ ແກ້ວດອກຊ້ອນ ສອງຂ້າງກໍ່ມາກມູນ

58 - ຄວາຍບໍ່ ກິນກຽງຫຍ້າ ຊ້າງຫງານສະຫງຽມສງຸດ
ຊຸ້ງບໍ່ ເວິ້ນໄກ່ນ້ອຍ ກະສັນດັ້ນຮົ່ງ

59 - ເມື່ອຈະ ໄຂລະຫັດໃຫ້ ອາຊະໄນຄາດທີ່ງ ອານນັ້ນ
ເມື່ອຈັກ ເວົ້າຕໍ່ແບ້ ກໍ່ກິວຟ້າຊິຂອດເມືອງ

60 - ເມື່ອບໍ່ ໄຂລະຫັດໃຫ້ ດອມຜິມຊິໄຂຮູບ ເທົາຕີ !
ຢ່າໄດ້ ເວົ້າຕໍ່ແຂ້ວ ມັນຊິຮູ້ຟັ່ງເຟືອນ

61- ເມື່ອຈັກ ໄຂຕໍ່ທູສອງກຳ້ ລິມພານກຳຫຼົງງວາກ ໄປນັ້ນ
ເມື່ອຊິ ຕ້ານຕໍ່ໜ້າ ຕາຊ້າຍພັດເສືອດເລີງ

62- ເມື່ອຊິ ໄຂລະຫັດໃຫ້ ດອມແຂນຊິຖົ້ມຂວ່າງ ໄປນັ້ນ
ມັນຈັກ ຊິລະອາດຖົ້ມ ເໜືອໃຕ້ທ່າເທິງ

63 - ກໍບໍ່ ໄຂລະຫັດຊ້າງ ສາມທິວຂາວເຜືອກ ແມ່ເຮີຍ
ແຄັນຄັ່ງ ຝູງໝູ່ເນື້ອ ເຟືອນຟົ້ນທົ່ວໄພ

64 - ເມື່ອຈັກ ໄຂຕໍ່ດັງສອງກຳ້ ກໍມິວຂົນຂົວເຮືອດ ເມັນນັ້ນ
ເມື່ອຈັກ ເວົ້າຕໍ່ເສືອ ສອງຊັ້ນກຳສຽດເມັນ

65 - ຄັນບໍ່ ເປັນດັ່ງຄຳເຮົາຕ້ານ ນອນຝັນໃຫ້ເຈົ້າສ່ຽງ ເອົາຖ້ອນ
ຢ່າໄດ້ ເວົ້າຕໍ່ຜ້າ ທິວມູ້ຍຕ່າງແຂງ

66- ຄັນວ່າ ໄຂລະຫັດທ້າງ ຝົນຊິລິນລົ້ນທົ່ງ ນາຕົ່
ເກົ່ງທໍ່ ນຳ້ຖ້ວມກ້າ ນາຊິແລ້ງຂາດເຂີນ

67- ຄັນບໍ່ ຂັນຕີໄວ້ ຊິເປັນຄວາມຟື້ງຊ່ວານ ໄປນັ້ນ
ຢ້ານທໍ່ ເສັ່ງໜ່ອຍເປັງ ທັງແກ້ວຄ່າເມືອງ

68 - ໝູຊີງ ມາຜີວໃຫ້ ຄືເຮົາຊິມີໂຊກ ແມ່ເຮີຍ
ຢ່າໄດ້ ເວົ້າຕໍ່ຈັງມ ແມວຊິຮູ້ເມື່ອກິນ

69 - ເຊີນແມ່ ທົງພະໄທເຍື້ອນ ຜະຫຍາໄວໃຫ້ຄິດຮ່ຳ ເອົາທ້ອນ
ບໍ່ໄດ້ ເສງແຕ່ກ້າ ນາເຮື້ອກໍ່ຫາກເສັ່ງ

70 - ຄັນໄດ້ ໄຂລະທັດເວົ້າ ດອມຂາຊິເຕັ້ນຂວ່າງ ໄປນັ້ນ
ເປັນດັ່ງ ລິມເປົ່າງື້ວ ປີວຟັ້ງທົ່ວໄພ

71 - ຄັນບໍ່ ຂັນຕີໄວ້ ກໍ່ປີວໄປທົ່ວໂລກ ເສັ່ງແລ້ວ
ອັນວ່າ ໜາວແລະຮ້ອນ ທັງເອົ້າກໍ່ເກີດມີ

72 - ຄັນເຮົາ ເຕືອນສະຕິໃຫ້ ເຕເມເຈົ້າປັ້ນໜຸ່ນ ເອົາທ້ອນ
ເຈົ້າຈິ່ງ ອິມຮີໄວ້ ຜອງເທົ່າຊົ່ວຊີວັງ

73 - ຄິດວ່າ ຈິມກະຈິດໝັ້ນ ຄວາມມີຈຶ່ງໄຂຕໍ່ ແມ່ເຮີຍ
ຢ່າໄດ້ ໄປທ່ຽວເວົ້າ ກາງບ້ານທົ່ວເມືອງ

74 - ຄິດຢາກ ຈິ່ງໃຈຄ້າ ພັດມາເວທາງຖໍ່
ບາດນີ້ ເສັ່ງກູດທ້າຍ ໂທມຊິປ້ອງກໍ່ບໍ່ມີ

75 - ສັງມາ ສິນເທດັ້ງ ດອມຊິວຊີຊິນເງືອກ
ແບັທາກ ລັ່ງງລູກໃຫ້ ເສືອຊິລັ່ງງພ່ຳແມວ

76 - ຄຳນີ້ ຖະຫວາຍແກ່ຜູ້ປັນຍາກວ້າງ ທົ່ງທັມໃຫ້ຕັດສ່ອງ ເອົາທ້ອນ
ຍັງຢາກ ຖາມຂ່າວເຄົ້າ ຂວັນເຮື້ອປ່ວຍນານ

77 - ເມື່ອບໍ່ ຖາມຂວັນໄຂ້ ຊິພວນຂີນຂັດວາດ ເພິ່ນຕໍ່
ອອກເຫຼືອງ ຄືເຮືອດຊ້າງ ແຖມເຮື້ອຕົ້ມຫວງ

78 - ຄັນວ່າ ໝາວຖືຄືງໄຂ້ ກໍຢາຈິງໃຈຜອກ ສັງຫ້ອນ
ແໜງວ່າ ໝາກໄມ້ຄ້າງ ໃຜຊິຮູ້ຮ່ອມກິນ

79 - ໃຫ້ເຈົ້າ ຊອມດູໜ້າ ຄືງເຫຼືອງນັບມື້ຕ່າງ ໄປນັ້ນ
ຈັກວ່າ ທຶງທຶດຊ້າງ ໃດແທ້ກໍໄຊ່ການ ທັ້ນແລ້ວ

80 - ຕາມແຕ່ ໝໍໂຫນຮູ້ ຫາຢາຫອດໃສ່ ເອົາຫ້ອນ
ເພື່ອນຫາກ ເປັນຜູ້ຮູ້ ຄືນໄຂ້ປ່ວຍນານ

81 - ຂວັນບໍ່ ມາຢາມຢ້າວ ເຮືອນຕິນ ກໍຮູ້ຄວ່າ ໄປນັ້ນ
ຈຶ່ງໄດ້ ຕ້ອງພາກບ້ານ ເໜືອໃຕ້ທ່າເທີງ

82 - ຕັ້ງແຕ່ ຂວັນປ່ວຍເຮື້ອ ເກົ້າຂວບປີປາຍ ນີ້ແລ້ວ
ແຄ້ນແຕ່ ອັງຄານມາເປັນມິດ ຈຶ່ງມີໂພຍຕ້ອງ

83 - ໃຜຢາກ ເຫັນເງົາຊ້າງ ແກມຊາງສັບເຮືອດ ໄປນັ້ນ
ທຶງທຶດ ແຖມຕົ້ມໄວ້ ແດງນ້ອຍເກີດຊອນ

84 - ແມ່ກໍ່ ຊອມດູໜ້າ ເທິງນານໄຂ້ບິ່ມ
ເຈົ້າແມ່ ໄຂ້ບິ່ມເຮື້ອ ແຜງເນື້ອທ່າງໄກ

85 - ສັງບໍ່ ໄປວອນໄຫ້ວ ໝໍຫວາຍຄູນເບິ່ງ ດູນັ້ນ
ຄືຊິ ຕ້ອງພາກບ້ານ ເໜືອໃຕ້ທີ່ໄກ

86 - ຄັນວ່າ ຖາມຫາໄຂ້ ກໍອຳເຊີງເຕັງວາດ ແມ່ເຮີຍ
ໄຊ່ຈັກ ນັ່ງຢູ່ຖ້າ ສະເໜີຟ້າເງົາຝົນ

| | | |
|---|---|---|
| 87 - ເມື່ອບໍ່ | ຖາມຫາຂໍ້ | ເຮຫວນເພື່ອນກໍຮຽກ ຫານັ້ນ |
| ເຈົ້າບໍ່ | ຍິກຄື້ວໃຫ້ | ໃຜຊິຮູ້ຮ່ອມໃດ ນັ້ນເດ |
| 88 - ຕາມແຕ່ | ໝໍໂຫນຮູ້ | ຊິຫາຢາທອດເກື່ອຍ ເອົາຫ້ອນ |
| ຄັນວ່າ | ເຫິງກວ່ານີ້ | ປີໜ້າຊິອອກເງົາ |
| 89 - ຕັ້ງແຕ່ | ທຳທານພົ້ນ | ແປນຕົວສາມຂວບ ປີນີ້ |
| ແຄນແຕ່ | ອັງຄານມາເປັນມິດ | ກໍຈຶ່ງເຫັນເງົາຊ້າງ |
| 90 - ອຸສາ | ບໍ່ເຄີຍຮາມຮ້າງ | ບາຄານລົດທະຮາດ ອີ່ດູເດ |
| ແມ່ບໍ່ | ເຄີຍກ່າວຖ້ອຍ | ຖະແຫຼງເວົ້າຕໍ່ຜູ້ໃດ ດອກນາ |
| 91 - ບໍ່ຮ່າວ | ເຫັນກໍຮ່າວຮູ້ | ກໍຫຼົງຊາດມາພົບ |
| 92 - ມາພົບ | ເຄຫັງຮ້າງ | ຝາບໍ່ມີແມວຊິທ່ອງ ຫຼຽວແລ້ວ |
| ຄັນວ່າ | ເຈົ້າບໍ່ຫາແຜ່ນກັ້ງ | ໜູຊິເຕັ້ນທ່ອງຫຼຽວ |
| 93 - ອາຍຸ | ຍືນຍາວໝັ້ນ | ຫຼາຍປີກໍເຫັນຫຼາກ ມານັ້ນ |
| ມາພົບ | ງູຖືກໜ້ວງ | ຫາງກັງວກອດໜູ |
| 94 - ເຖິງເມື່ອ | ເດືອນຈຽງຄ້ອຍ | ໜາວມາບໍ່ຮູ້ເມື່ອ ຄືງນໍ |
| ເດືອນຍີ່ | ມາແລ່ນຮ້ອນ | ເດືອນຫ້າຊິຕ່າວໜາວ |
| 95 - ເຖິງເມື່ອ | ເດືອນຈຽງຂົ້ນ | ໜາວລົມຈຶ່ງແມ່ນຮິດ |
| ເດືອນຫ້າ | ມາແລ່ນຂ້ອນ | ໜາວຄ້ອຍຄັ່ງຫວງ |
| 96 - ຄັນວ່າ | ສັງຂານຂົ້ນ | ເດືອນສາມຈຶ່ງຟັງຂ່າວ |
| ເດືອນສີ່ | ນ້ຳຖ້ວມກ້າ | ປາຊິເຕັ້ນຟັ່ງເຟືອນ |
| 97 - ອັນວ່າ | ນາທ້ອງຊ້າງ | ຊິບົກຂາດເຂີນເສຽ ແມ່ເຮີຍ |

ຝູງໝູ່ ຊາວນາໂພນ ຊິຊຸ່ມງາມຊຽວອ້ອນ

98 - ຫຼອນວ່າ ເປັນດັ່ງຄຳແມ່ຕ້ານ ນອນຄືນໃຫ້ຄິດຮ່ຳ ເອົາທ້ອນ
ແຮງຄິດ ຊ້ຳຈົ່ມຮ້ອນ ນອນໄຂ້ສັ່ນສາຍ

99 - ຄັນວ່າ ໜາວຖືໄຂ້ ກໍຢາໄລຜືນແຜ່ນ ເຮົານັ້ນ
ເຈົ້າແມ່ ຄອຍໝັ້ນຕູ້ມແຜ່ນຜ້າ ຄາງອີ້ຫາກຊິເຫີຍ ບໍ່ຢາແລ້ວ

100 - ມັນຕັ້ງ ຜິດເຖິງເຄົ້າ ຕານາຍສອນສັ່ງ
ຜິດເພິ່ນ ຈັກບອກໃຫ້ ຄອງລຳແກ່ເຮົາ

101 - ເຊີນແມ່ ທົ່ງພະໄທຖ້ອນ ພໍຊະງາວ ໄວ້ທັ້ນກ່ອນ
ຍັງຊິ ເວົ້າໃຫ້ແຈ້ງ ເມືອໜ້າກໍຈຶ່ງຟັງ ທັ້ນທ້ອນ

102 - ຜິບໍ່ ມີຫຼາຍຂໍ້ ຊິເຫັນຄວາມພົ້ນເພື່ອນ ມານັ້ນ
ຜອງຊິ ເວົ້າໃຫ້ແຈ້ງ ຫູຮູ້ຄູ່ຄົນ

103 - ຍັງຢາກ ຖາມຫຼາຍຂໍ້ ຕາມຄວາມເພິ່ນກ່າວ ມານັ້ນ
ເມື່ອບໍ່ ເວົ້າບອກລີ້ ມີຂໍ້ເພິ່ນກໍຖາມ

104 - ຍັງຢາກ ຖາມຂ່າວກ້ອຍ ເພັງລາບຫຼຽມຫອມ ບີ່ວນັ້ນ
ຢ່າໄດ້ ເອົາເຂົາຮໍ່ ເໝືອດຄົນຕາງເພັ້ງ
ສິນເຫດັ່ງ ຫຼຽມຫອມຄ້ອຍຄັ່ງ ງາມເດ
ແຮ່ງຊຳ ແຖມຕົ່ມຂົ້ວ ຫຼຽມປີ້ງປົ່ນໂຮຍ

105 - ເຫັນວ່າ ໄດ້ຕ່ອນກ້ອຍ ກໍຫຼົງລາບລືມຜັກ ວ່າລີ
ກໍບໍ່ ເປັນທີ່ອາໄລປະ ເປົ່າເສຽສູນຮ້າງ
ວ່າບໍ່ ເກັບຜັກໜົ້ງ ບາຍແກງຕົ້ມແຈ່ວ
ອິດພໍ ເຍື້ອນໃສ່ໝໍ້ ກໍຫຼອນຮູ້ເມື່ອຫອມ ບໍ່ຮູ້

| | | |
|---|---|---|
| 106 - ບໍ່ແມ່ນ | ແນວນາມເຊື້ອ | ວິງສາຜັກກາດ |
| ແມ່ຈຶ່ງ | ບໍ່ເກັບໃສ່ຊ້າ | ກົວຢ້ານແປດມື |
| 107 - ບໍ່ໃສ່ | ວິງສາເຊື້ອ | ແນວຫຼຽມຫອມບົ່ວ ເພິ່ນນັ້ນ |
| ເຊື້ອຫາກ | ຫອມອ່ອນອ້ວນ | ຊິກ້ານແກ່ນກຸງ ອຸ່ນເຮີຍ |
| 108 - ອິດພໍ | ເຍື້ອນຜ່ຽນໜ້າ | ກໍຫຼິງຊາດຄືນພົບ ແດ່ທ້ອນ |
| 109 - ພໍຍັ້ງ | ຍັ້ງຢູ່ຖ້າ | ຊາມໄດ້ຕ່າວມາ ແດ່ທ້ອນ |
| 110 - ຄິດຢາກ | ໄປຢາມເຈົ້າ | ທາງຫຼວງ ພັດມາແຄບ |
| ບຸນບໍ່ມີ | ທາງຜິກເວັ້ນ | ມາຊ້າກໍ່ຈຶ່ງເຖິງ |
| 111 - ເຈົ້າວ່າ | ປີປາຍຕ້ານ | ເຫັນເງົາແຕ່ພໍສ່ອງ ກໍດີທ້ອນ |
| ຍັງຢາກ | ຕ້ານໄຕ່ຖ້ອຍ | ຊິຂໍເວົ້າຝາກຄວາມ |
| 112 - ຕູ່ນຫາກ | ຫຼັບຕາໃຫ້ | ເຄືອງໃຈຈຶ່ງຖາມຂ່າວ |
| ອິດພໍ | ຍັ້ງຢູ່ຖ້າ | ຊາມມ້າຕ່າວຄືນ ແດ່ທ້ອນ |
| 113 - ຄິດຢາກ | ໄປຢາມເຈົ້າ | ທາງຫຼວງພັດມາແຄບ |
| ເປັນຫຍັງ | ເຈົ້າຈຶ່ງມາໜ່ວງນ້າວ | ເໜືອທ້ອງສວດພອນ ແມ່ເຮີຍ |
| 114 - | ຫິນຫວາຍເອົ້າ | ໃນຄີງກໍນານຊວ່າງ |
| | ໄດ້ດັ່ງນີ້ | ບໍ່ຄືຕ້ອງທີ່ໄກ |
| 115 - ເຈົ້າວ່າ | ໜັກໜ່ວງເນື້ອ | ຫິນສະຫວາດພວນພິດ ນັ້ນລື |
| ແສນແສບ | ໃນມະໂນນູມ | ຢູ່ຫິນຫວງແຄ້ນ |
| ມີທໍ່ | ໂສກາກັ້ນ | ດຽວດາຍຫິນທະເວດ |
| ໜັກໜ່ວງ | ເຕັ້ງບອບຊໍ້າ | ໃນເນື້ອແສບສະໝອງ |

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ